# 5 ບັດການບວກການລົບ

**1. ຫົວຂໍ້** - ການບວກ ແລະ ການລົບ ( ປ.1 ບົດທີ 14 ການຂຽນຈຳນວນແຕ່ 0 ເຖິງ 8, ບົດທີ 15 ຜົນບວກ ແລະ ຜົນລົບຂອງສອງຈຳນວນ )

**2. ຈຸດປະສົງ** - ນັກຮຽນປະຖົມສາມາດເຂົ້າໃຈກ່ຽວກັບຄວາມຕ່ຳສູງຈຳນວນໂດຍເບິ່ງ ຮູບແຕ້ມນົກ " ບັດການບວກການລົບ " ໄດ້.

**3. ອຸປະກອນ** - ເຈ້ຍ (ຫຼັງເຈ້ຍປະຕິທິນເໝາະ, ເພາະວ່າມັນດີ ແລະ ໃຫຍ່), ເຝີດມາຈິກ, ສະກ໋ອດ ແລະ ມີດຕັດ

**4. ວິທີຜະລິດ**

(1) ຕັດເຈ້ຍໃຫ້ໄດ້ຂະໜາດປະມານ 15 × 40 cm ສອງໃບ.

(2) ແຕ້ມງ່າໃສ່ເຈ້ຍ ສອງໃບ. ⟶



(3) ເອົາເຈ້ຍສອງໃບຊ້ອນກັນແລ້ວ, ຕິດບັນດ້ວຍສະກ໋ອດ.

(4) ຕັດເຈ້ຍເທິງທາງຊື່ແບບນີ້. ⟶



(5) ແຕ້ມນົກໃສ່ເຈ້ຍເທິງ.

**5. ວິທີໃຊ້**

ໃຊ້ໃນເວລາກ່ອນສອນກ່ຽວກັບການບວກ ແລະ ການລົບ. ເດັກນ້ອຍຈຶ່ງມີຄວາມສົນໃຈ ແລະ ເຂົ້າໃຈກ່ຽວກັບຄວາມຕ່ຳສູງຈຳນວນໄດ້.

«ການບວກ» ຄູອາຈານເວົ້າວ່າ

(1) "ຈະເວົ້າເລື່ອງນົກ" (ໃຫ້ເດັກນ້ອຍເບິ່ງຮູບມີແຕ່ງ່າ)

(2) ກ່ອນອື່ນໝົດ, ນົກ1ໂຕ ມາແລ້ວ (ໃຫ້ຮູບນົກ 1ໂຕ ອອກ)

(3) ໄປອີກ, ນົກ2ໂຕ ກໍມາອີກແລ້ວ (ໃຫ້ຮູບນົກ 2ໂຕ ອອກ)

(4) ດຽວນີ້ ທັງໝົດມີຈັກໂຕ?

«ການລົບ» ຄູອາຈານເວົ້າເລື່ອງຄືການບວກ.



**6. ໝາຍເຫດ**

★ ຫຼັງຈາກຄູເວົ້າແລ້ວ, ໃຫ້ເດັກນ້ອຍເວົ້າເລື່ອງ.

★ ຖ້າເດັກນ້ອຍທັງຟັງເລື່ອງທັງຍ້າຍ "ບລັອກເລກ", ພວກລາວຈຶ່ງເຂົ້າໃຈແຈ້ງກ່ວາ.